## ບົດທີ 6

# ພະເຢຊູຮັບສິນບັບຕິສະມາ




**1** ເຮົາຮຽນມາແລ້ວເລື່ອງເຫດການທຳອິດໃນເຫດການ 3 ປະການສະໄໝປີທີ່ພະເຢຊູຕຽມຕົວຈາກພະທຳມັດທາຍ. ເຫດການປະການທຳອິດນັ້ນຄື: ການປະກາດຂອງໂຢຮັນບັບຕິສະໂຕ ມີອີກສອງເຫດການຄືຫຍັງ?

ກ. ____________________________________________

ຂ. ____________________________________________

**2** ເຫດການທັງສອງປະການນັ້ນຄື ການຮັບສິນບັບຕິສະມາແລະການທົດລອງຂອງພະເຢຊູເປັນການສະແດງເຖິງລັກສະ ນະຂອງພະເຢຊູ. ພະອົງເລີ້ມຕົ້ນການປະກາດພະທຳຂອງພະເຈົ້າດ້ວຍການເຮັດຢ່າງໃດກ່ອນ? ______________________________

ຕອບ:

**1** *ກ. ພະເຢຊູຮັບສິນບັບຕິສະມາ* *ຂ. ການທົດລອງຂອງພະເຢຊູ*

**2** *ຮັບສິນບັບຕິສະມາ*

**3** ໃນເຫຼັ້ມທີ I ເຮົາຮຽນມາແລ້ວເລື່ອງສະໄຫມໄວເດັກຂອງພະເຢຊູ ພະກຳເນີດຂອງພະເຢຊູຄຣິດເປັນການອັດສະຈັນ.

ກ. ແມ່ຂອງພະເຢຊູ ຊື່ຫຍັງ? ________________

ຂ. ພໍ່ແທ້ຂອງພະເຢຊູຄືພະເຈົ້າ ບໍ່ແມ່ນທ່ານໂຢເຊັບເພາະພະເຢຊູເກີດດ້ວຍເດດຂອງໃຜ?

________________

**4** ຍິ່ງກວ່ານັ້ນບໍ່ມີໃຜໃນຈັກກະວານປຽບກັບພະອົງໄດ້ ເພາະພະເຢຊູເປັນບຸກຄົນດຽວແຕ່ມີຈັກລັກສະນະ?________________

**5** ລັກສະນະເຫຼົ່ານັ້ນຄືລັກສະນະໃດແດ່? ________ ແລະ ________ ດັ່ງນັ້ນພະເຢຊູບໍ່ເປັນລູກຊອດລະຫວ່າງພະເຈົ້າກັບມະນຸດ ແຕ່ເປັນຜູ້ທີ່ມີລັກສະນະຂອງພະເຈົ້າເຕັມສ່ວນດ້ວຍ. ພະເຢຊູເປັນທັງ ________ ແລະເປັນທັງ ________ (ຕື່ມຄວາມທີ່ຂາດ)

**6** ແມ່ນຜູ້ທີ່ເປັນພະເຈົ້າແທ້ແລະເປັນມະນຸດແທ້ ຈຶ່ງຈະເປັນຄົນກາງລະຫວ່າງມະນຸດກັບພະເຈົ້າໄດ້. ມີຜູ້ກາງຜູ້ດຽວທີ່ຈະຊ່ວຍໃຫ້ລອດພົ້ນໄດ້ ຜູ້ນັ້ນຄືໃຜ? ________________

**7** ອີກເທື່ອໜຶ່ງສິ່ງທີ່ພະເຢຊູເຮັດທຳອິດໃນການປະກາດພະທຳຄືຫຍັງ? ________________

**8** ພະເຢຊູຊົງສະແດງວ່າ ໄດ້ເຂົ້າຮ່ວມກັບມະນຸດໃນພະກຳເນີດກ່ອນ ແລ້ວໃນການຮັບສິນບັບຕິສະມາອີກດ້ວຍ. ໃນພະທຳ ເຮັບເລີ 2:17 ບອກວ່າພະອົງຊົງຕ້ອງການເປັນເໝືອນອ້າຍນ້ອງຂອງຕົນຈັກຢ່າງ? ________________

**9** ເພື່ອຈະແດງຕົວເປັນມະນຸດເໝືອນຢ່າງກັບອ້າຍນ້ອງຂອງຕົນ ພະເຢຊູຮ່ວມກັບເຂົາຮັບສິນຫຍັງ? (ມທ 3:13)________________

| |
|---|
| ໃຫ້ທ່ານອ່ານ ມັດທາຍ 3:13-17 ຫຼັງຈາກອ່ານແລ້ວມາຮຽນຕໍ່ໄປ |

ຕອບ:

**3** *ກ. ມາລີອາ ຂ. ພະວິນຍານບໍລິສຸດ*

**4** *ສອງລັກສະນະ*

**5** *ພະເຈົາ ແລະ ມະນຸດ ທັງພະເຈົາ ທັງມະນຸດ*

**6** *ພະເຢຊູຄຣິດ*

**7** *ການຮັບສິນບັບຕິສະມາ*

**8** *ທຸກຢ່າງ*

**9** *ຮັບສິນບັບຕິສະມາ*

**10** ຄົນທັງຫມົດທີ່ຮັບສິນບັບຕິສະມາຈາກໂຢຮັນບັບຕິສະໂຕມາຮັບສາລະພາບຫຍັງ? (ມທ 3:6)

______________________________________________

______________________________________________

**11** ພະອົງມີບາບບໍ່? (ເຮັບເລີ 4:14-15) ______________________

**12** ເພາະສະນັ້ນການຮັບສິນຂອງພະເຢຊູ ຕ່າງກັນກັບການຮັບສິນຂອງຜູ້ອື່ນຢ່າງໃດ? ______

______________________________________________

**13** ໃນເມື່ອພະເຢຊູມາຮັບສິນບັບຕິສະມານັ້ນ ໂຢຮັນຖາມພະອົງຢ່າງໃດ? (ມທ 3:14) _____

______________________________________________

**14** ຖ້າຄົນອື່ນນັ້ນຈະຮັບສິນບັບຕິສະມາເປັນສັນຍາລັກວ່າເຂົາຮັບສາລະພາບຜິດບາບ ແຕ່ພະເຢຊູບໍ່ມີຜິດບາບ. ດັ່ງນັ້ນ ແມ່ນເພາະເຫດໃດທີ່ພະເຢຊູຮັບສິນບັບຕິສະມາ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເພາະພະອົງມີບາບ

ຂ. ເພື່ອເຮັດໃຫ້ໂຢຮັນບັບຕິສະໂຕດີໃຈ

ຄ. ເພື່ອຮ່ວມກັບຄົນບາບໃນທຸກຢ່າງເຖິງວ່າພະອົງບໍ່ມີບາບກໍຕາມ

**15** ພະເຢຊູຮ່ວມກັບໃຜ ໃນເຮືອນຂອງມັດທາຍ? (ມທ 9:10)

____________________ ແລະ ____________________

**16** ໃຫ້ອ່ານ ມທ 9:12-13 ແມ່ນເພາະເຫດໃດທີ່ພະເຢຊູຮ່ວມກັບຄົນບາບ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເພື່ອເຮັດບາບກັບເຂົາ

ຂ. ເພື່ອເອີ້ນເຂົາມາໃຫ້ໄດ້ລອດພົ້ນ

ຄ. ເພາະທີ່ຈິງເຂົາເປັນຄົນດີແລ້ວ

ຕອບ:

***10*** *ຮັບສາລະພາບຜິດບາບ*

***11*** *ບໍ່ມີເລີຍ*

***12*** *ພະເຢຊູບໍ່ມີບາບທີ່ຈະສາລະພາບຢ່າງຄົນອື່ນ*

***13*** *ຂ້ານ້ອຍຕ້ອງການທີ່ຈະຮັບສິນບັບຕິສະມາຈາກທ່ານ ແລ້ວທ່ານຈະມາຫາຂ້ານ້ອຍຫຼື.*

***14*** *ຄ.ຖືກ*

***15*** *ຄົນເກັບພາສີ ແລະຄົນນອກສິນທຳ*

***16*** *ຂ.ຖືກ*

**17** ເທື່ອໃດທີ່ເຮົາຈະກ່າວເຖິງການຮັບສິນບັບຕິສະມາຂອງພະເຢຊູ ເຮົາຄວນຈະອະທິບາຍວ່າພະເຢຊູບໍ່ມີບາບ ແຕ່ພະເຢ ຊູຊົງຮ່ວມກັບມະນຸດເພື່ອໃຫ້ເຂົາມາຫາພະອົງ. ມະນຸດທົ່ວໄປຈະຕ້ອງສາລະພາບຫຍັງ? ________________________________________

**18** ເປັນຫຍັງພະເຢຊູຈຶ່ງຮັບສິນບັບຕິສະມາ? ________________________________

**19** ພະຄຳພີສອນວ່າຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ ສະນັ້ນພະເຢຊູຈຶ່ງເຂົ້າຮ່ວມກັບຄົນບາບ. ການຮັບສິນບັບຕິ ສະມາຂອງພະອົງເປັນສັນຍາລັກປະການຫນຶ່ງ ແຕ່ຜົນສຸດທ້າຍຂອງການຮ່ວມກັບຄົນບາບພະອົງຈະຖືກຄຶງໄວ້ທີ່ໄມ້ກາງແຂນເພື່ອຄົນບາບ.

ກ. ພະເຢຊູເຄີຍເຮັດບາບບໍ່? (I ເປໂຕ 2:22) ____________________________

ຂ. ຖ້າພະເຢຊູບໍ່ມີບາບເປັນຫຍັງພະອົງຈຶ່ງຕາຍທີ່ໄມ້ກາງແຂນ? (I ເປໂຕ 2:24) _______

________________________________________________________

**20** ໃນມາລະໂກ 10:38 ພະເຢຊູຍົກຄວາມປຽບທຽບສອງປະການມາເພື່ອອ້າງເຖິງຄວາມຕາຍຂອງພະອົງ ປະການ ຫນຶ່ງຄືຈອກທີ່ພະອົງຈະດື່ມ ແລະອີກອັນຫນຶ່ງຄືຫຍັງ? __________

________________________________________________________

**21** ໃຫ້ຫມາຍ √ ໃສ່ຂໍ້ທີ່ເຫັນວ່າຖືກ ແລະ X ໃສ່ຂໍ້ທີ່ເຫັນວ່າຜິດ.

_____ ກ. ໃນການຮັບສິນບັບຕິສະມາແລະໃນຄວາມຕາຍ ພະເຢຊູເຂົ້າຮ່ວມແຕ່ກັບຄົນດີແລະຄົນຊອບທຳ.

_____ ຂ. ໃນການຮັບສິນບັບຕິສະມາແລະໃນຄວາມຕາຍດ້ວຍ ເພາະພະອົງເປັນຄົນບາບ.

_____ ຄ. ໃນການຮັບສິນບັບຕິສະມາແລະໃນຄວາມຕາຍເຫມືອນກັນ ພະເຢຊູເຂົ້າຮ່ວມກັບມະນຸດຊຶ່ງເປັນຄົນບາບ ແຕ່ພະເຢຊູບໍ່ມີບາບເລີຍ.

_____ ງ. ໃນຄວາມຕາຍຂອງພະອົງຫມາຍເຖິງພະອົງຮ່ວມກັບຄວາມບາບຂອງມະນຸດແລະໃນການຮັບສິນບັບຕິສະ ມາພະອົງຮ່ວມກັບເຂົາໃນການຮັບສາລະພາບຜິດບາບ.

**22** ມີຄວາມສຳພັນລະວ່າງການຮັບສິນບັບຕິສະມາແລະຄວາມຕາຍຂອງພະອົງ. ໃນເຫດການທັງສອງປະການນັ້ນພະເຢ ຊູຮ່ວມກັບຄົນໃດ? _________________________________

ຕອບ:

**17** *ຜິດບາບ*

**18** *ເພື່ອສະແດງການຮ່ວມກັບຄົນອື່ນ (ຄ້າຍຄືກັນກໍໄດ້)*

**19** *ກ. ບໍ່ ຂ. ຕາຍແທນພວກເຮົາທີ່ເປັນຄົນບາບ*

**20** *ບັບຕິສະມາທີ່ພະອົງຈະຮັບ*

**21** *ຄ.ຖືກ*

**22** *ຮ່ວມກັບຄົນບາບ (ຄ້າຍຄືກັນກໍໄດ້)*




**23** ການຮັບສິນບັບຕິສະມາຂອງພະເຢຊູ ຄືການເລີ້ມຕົ້ນເດີນທາງໄປເຖິງໄມ້ກາງແຂນ. ໃນການຮັບສິນບັບຕິສະມາຂອງ ພະອົງສະແດງວ່າຈະພົວພັນກັບຄົນບາບ ແລ້ວພົນສຸດທ້າຍພະອົງຊົງຕາຍເພື່ອບາບນັ້ນ. ປາກົດວ່າ ພະຍາມານພະຍາຍາມທຸກວິທີທາງທີ່ຈະຂັດຂວາງບໍ່ໃຫ້ພະອົງນຳເອົາຄວາມພົ້ນມາເຖິງມະນຸດ. ໃນເວລາດຽວທີ່ພະອົງ ຈະຮັບສິນບັບຕິສະມາ ພະອົງພົບການທົດລອງໃຫ້ເພີຕົວບໍ່ໃຫ້ເຂົ້າຮ່ວມກັບຄົນບາບໃນພິທີນັ້ນ. ແມ່ນຜູ້ໃດອອກປາກການທົດລອງນັ້ນ? (ມທ 3:14) ________________________________________

**24** ຖ້າພະເຢຊູບໍ່ຍອມພົວພັນກັບຄົນບາບພະອົງຈະບໍ່ຮັບສິນບັບຕິສະມາ ແລະພະອົງຈະບໍ່ຍອມຕາຍທີ່ໄມ້ກາງແຂນ ແຕ່ ພະອົງຊົງພົວພັນຢູ່. ຂໍໃຫ້ທ່ານອ່ານຄຳອຸປະມາເລື່ອງໄທຊາມາເລຍຜູ້ໃຈດີໃນ ລູກາ 10:30-37

ກ. ຖ້າບໍ່ຍອມເຂົ້າຮ່ວມກັບຄົນບາບພະອົງຈະປຽບເຫມືອນກັບສອງຄົນໃດໃນຄຳອຸປະມານີ້?

_________________________ ແລະ _________________________

ຂ. ພະອົງໄດ້ເຂົ້າຮ່ວມກັບຄົນບາບ ເພາະສະນັ້ນພະອົງປຽບເຫມືອນຄົນໃດ? __________

**25** ໃນບົດທາຍ ບົດທີ 4 ພະຍາມານຈະມາທົດລອງພະເຢຊູໂດຍກົງ ແຕ່ໃນເທື່ອກ່ອນໆນັ້ນມານສະເຫນີການທົດລອງມາ ທາງປາກຂອງຂ້າໃຊ້ຂອງພະອົງທີ່ເຫັນວ່າບໍ່ເຫມາະສົມທີ່ພະອົງຈະຮັບສິນບັບຕິສະມາຈາກເພິ່ນ. ຂ້າໃຊ້ຂອງພະເຈົ້າ ຜູ້ນັ້ນຄືໃຜ? ________________

**26** ພະເຢຊູພົບການທົດລອງຢ່າງໃດຢູ່ແມ່ນ້ຳຢໍດາເນ? ____________________________

ຕອບ:

**23** *ໂຢຮັນບັບຕິສະໂຕ*

**24** *ກ. ປະໂລຫິດ ແລະ ພວກເລວີ ຂ. ພະສຸລະສຽງຈາກຟ້າ ຂ. ໄທຊາມາເລຍຜູ້ໃຈດີ*

**25** *ໂຢຮັນບັບຕິສະໂຕ. ຂ. ພະສຸລະສຽງຈາກຟ້າ*

**26** *ທົດລອງບໍ່ໃຫ້ເຂົາຮ່ວມກັບຄົນບາບ (ຄ້າຍຄືກັນກໍໄດ້)*

**27** ເຮົາເຫັນແລ້ວວ່າພະເຢຊູເຂົ້າຮ່ວມກັບມະນຸດຢ່າງເຕັມສ່ວນ.

ກ. ການທີ່ພະເຢຊູຈຸ່ມລົງນ້ຳຮັບສິນບັບຕິສະມາສະແດງເຖິງລັກສະນະໃດ ໃນລັກສະນະຂອງພະອົງທີ່ມີສອງຢ່າງນັ້ນ? ____________________

ຂ. ແຕ່ຍັງມີອີກປະການໜຶ່ງປາກົດມາດ້ວຍ. ໃຫ້ທ່ານອ່ານ ມທ 3:17 ມີຫຼັກຖານໃດວ່າພະອົງເປັນພະເຈົ້າ? ____________________

**28** ກ. ແຄມແມ່ນ້ຳຢໍດາເນນີ້ ມີຫຼັກຖານໃດວ່າພະເຢຊູເປັນມະນຸດ? ____________________

ຂ. ມີຫຼັກຖານໃດວ່າ ພະເຢຊູຊົງເປັນພະເຈົ້າ? ____________________

**29** ກ. ການຮັບສິນບັບຕິສະມາສະແດງເຖິງລັກສະນະໃດຂອງພະອົງ? ____________________

ຂ. ພະສຸລະສຽງຈາກຟ້າສະຫວັນສະແດງເຖິງລັກສະນະໃດຂອງພະອົງ? ____________________

**30** ໃນເມື່ອພະເຢຊູຮັບສິນບັບຕິສະມາກ່ອນຈະຕັ້ງຕົ້ນປະກາດພະທຳຄື ມີທັງສາມອົງໃນຕີເອກອະນຸພາບປາກົດມາ. (ອ່ານ ມທ 3:16-17)

ກ. ພະສຸລະສຽງຈາກຟ້າແມ່ນໃຜປາກ? ____________________

ຂ. ຜູ້ຮັບບັບຕິສະມາແມ່ນໃຜ? ____________________

ຄ. ແມ່ນໃຜລົງມາເໝືອນນົກເຂົາ? ____________________

**31** ໃນບົດຮຽນຕໍ່ໄປເຮົາຈະຮຽນລະອຽດກ່ຽວກັບ ຕີເອກອະນຸພາບ ໝາຍຄວາມວ່າ ເຖິງພະເຈົ້າເປັນອັນໜຶ່ງອັນດຽວກັນກໍຕາມ ແຕ່ປາກົດມາເປັນສາມພະພາກ. ທັງສາມນັ້ນປາກົດໃຫ້ ເຫັນໃນເຫດການທີ່ພະເຢຊູຮັບສິນບັບຕິສະມາຄື: (ໃຫ້ຕື່ມຄວາມທີ່ຂາດ)

ກ. ພະ ____________________

ຂ. ພະ ____________________

ຄ. ພະ ____________________

**32** ກ. ການທີ່ເຂົ້າຮ່ວມກັບມະນຸດແມ່ນພະພາກໃດ? ____________________

ຂ. ໃນທົ່ວຈັກກະວານມີແຕ່ຜູ້ດຽວທີ່ມີທັງລັກສະນະມະນຸດ ແລະລັກສະນະພະເຈົ້າຄືໃຜ?

____________________

ຕອບ:

**27** *ກ. ມະນຸດ*

**28** *ກ. ການຮັບສິນບັບຕິສະມາ*

**29** *ກ. ມະນຸດ ຂ. ພະເຈົາ*

**30** *ກ. ພະບິດາ ຂ. ພະເຢຊູ ຄ. ພະວິນຍານບໍລິສຸດ*

**31** *ກ. ພະບິດາ ຂ. ພະບຸດ ຄ. ພະວິນຍານບໍລິສຸດ*

**32** *ກ. ພະບຸດ (ພະເຢຊູຄຣິດກໍໄດ້) ຂ. ພະເຢຊູຄຣິດ*

**33** ເຮົາຮຽນຮູ້ຢູ່ແລ້ວວ່າມີຄວາມສຳພັນລະຫວ່າງການຮັບສິນບັບຕິສະມາແລະຄວາມຕາຍຂອງພະອົງ. (ໃຫ້ໝາຍ √ ໃສ່ຂໍ້ທີ່ຖືກ ແລະ X ໃສ່ຂໍ້ທີ່ຜິດ)

______ ກ. ພະເຍຊູເຂົ້າຮ່ວມກັບມະນຸດໃນການຮັບສິນບັບຕິສະມາປະການດຽວ.

______ ຂ. ພະເຍຊູເຂົ້າຮ່ວມກັບມະນຸດໃນຄວາມຕາຍທີ່ໄມ້ກາງແຂນປະການດຽວ.

______ ຄ. ພະເຍຊູເຂົ້າຮ່ວມກັບມະນຸດທັງໃນການຮັບສິນບັບຕິສະມາແລະຄວາມຕາຍດ້ວຍ.

______ ງ. ພະເຍຊູບໍ່ເຂົ້າຮ່ວມກັບຄົນບາບໃນຈັກປະການເລີຍ.

**34** ການຮັບສິນບັບຕິສະມາຂອງພະອົງແລະຄວາມຕາຍຂອງພະອົງທີ່ໄມ້ກາງແຂນຄືກັນໃນດ້ານໃດ? ____________________________________________

**35** ໃນການຮັບສະພາບເປັນມະນຸດໝາຍຄວາມວ່າ ພະເຍຊູວາງອຳນາດຂອງພະເຈົ້າໄວ້ຄາວໜຶ່ງ ໃນການເຂົ້າຮ່ວມກັບ ມະນຸດພະເຍຊູຈຶ່ງຍອມຕໍ່ຕ້ານພະຍາມານໂດຍເຄື່ອງອາວຸດທີ່ພະເຈົ້າເອົາມາໃຫ້ພວກເຮົາ ຄືພະວິນຍານບໍລິສຸດ ແລະ ພະທຳຂອງພະເຈົ້າ. ດັ່ງນັ້ນໃນສະພາບເປັນມະນຸດແລະໂດຍເຄື່ອງອາວຸດທີ່ພະເຈົ້າປະທານໃຫ້ພວກເຮົາສອງປະການ ນັ້ນພະເຍຊູກໍໃຊ້ເພື່ອເອົາຊະນະມານ. ຂໍໃຫ້ອ່ານ ມທ 3:16-17.

ກ. ແມ່ນອາວຸດໃດທີ່ປາກົດມາໂດຍຮູບຮ່າງນົກເຂົາ? ____________________

ຂ. ແມ່ນເຄື່ອງອາວຸດໃດທີ່ປາກົດມາໃນພະສຸລະສຽງຈາກຟ້າ? ______________

**36** ພະເຍຊູຮັບເຄື່ອງອາວຸດສອງປະການໃດໃນເວລາຮັບສິນບັບຕິສະມາ?

ກ. ________________________ ແລະ ______________________

ຂ. ເຄື່ອງອາວຸດສອງປະການນັ້ນປາກົດມາແບບໃດ? ____________________

**37** ໃນພະກຳເນີດຂອງພະອົງເຮົາໄດ້ຮຽນຮູ້ເລື່ອງລັກສະນະສອງປະການໃນບຸກຄົນດຽວ ເຊັ່ນດຽວກັນໃນເຫດການທຳອິດ ທີ່ພະອົງຈະເລີ້ມຕົ້ນປະກາດພະທຳນັ້ນ ເຮົາເຫັນລັກສະນະສອງປະການໃນບຸກຄົນດຽວອີກ.

ກ. ພະເຍຊູສະແດງເຖິງການຮ່ວມກັບມະນຸດໃນເຫດການໃດ? ______________

ຂ. ພະເຍຊູສະແດງເຖິງການເປັນພະເຈົ້າໃນເຫດການໃດ? ________________

ຕອບ:

***33*** *ຄ. ຖືກ*

***34*** *ຄືກັນໃນດ້ານທີ່ພະເຍຊູ ເຂົາຮ່ວມກັບ ມະນຸດຊຶ່ງເປັນບາບ. (ຄຳຄ້າຍກັນກໍໄດ້)*

***35*** *ກ. ພະວິນຍານບໍລິສຸດ ຂ. ພະທຳຂອງພະເຈາ*

***36*** *ກ. ພະວິນຍານບໍລິສຸດ ແລະ ພະທຳຂອງພະເຈາ*

*ຂ. ເໝືອນນົກເຂົາ ແລະ ພະສຸລະສຽງຈາກຟ້າ*

***37*** *ກ. ໃນການຮັບສິນບັບຕິສະມາ ຂ. ພະສຸລະສຽງຈາກຟ້າ*

**38** ດັ່ງນັ້ນໃນພະກຳເນີດແລະໃນການຮັບສິນບັບຕິສະມາເຮົາເຫັນວ່າ

ກ. ພະເຢຊູເປັນ ________________ ແທ້.

ຂ. ພະເຢຊູເປັນ ________________ ແທ້. (ຕື່ມຄວາມທີ່ຂາດ)

**39** ຈົ່ງຕື່ມຄວາມທີ່ຂາດໃສ່ໃນບ່ອນວ່າງຕໍ່ໄປນີ້: ໃນບົດຮຽນນີ້ເຮົາໄດ້ຮຽນເລື່ອງເຫດການທີສອງທີ່ມັດທາຍລາຍງານໃນສະໄໝປີທີ່ພະເຢຊູຕຽມຕົວ. ໃນເຫດການນັ້ນ

(ກ) ພະເຢຊູຊົງຮັບ ________________________________________________

(ຂ) ຈາກ ________________________________________________

(ຄ) ໃນແມ່ນ້ຳ ________________________________________________

(ງ) ຜູ້ອື່ນໆ ນັ້ນຮັບບັບຕິສະມາໂດຍຮັບສາລະພາບ ______________________ ຂອງເຂົາ

(ຈ) ແຕ່ພະເຢຊູບໍ່ມີ ________________________________________________

(ສ) ພະເຢຊູຮັບສິນບັບຕິສະມາເພື່ອສະແດງການ ______________________ ກັບມະນຸດ

(ຊ) ທີ່ຕົກໃນ ________________________________________________

(ຍ) ແມ່ນໂດຍການຮັບສິນບັບຕິສະມາທີ່ພະເຢຊູເຂົ້າຮ່ວມກັບຄົນບາບແລ້ວຕໍ່ໄປຈະແມ່ນດ້ວຍຄວາມຕາຍທີ່ ________________________________________________

(ດ) ພະອົງຈຶ່ງຊະນະຄວາມບາບໄດ້. ພະຍາມານພະຍາຍາມທຸກວິທີທາງທີ່ ຈະໃຫ້ພະອົງເລີກການນັ້ນ. ມານທົດລອງບໍ່ໃຫ້ພະເຢຊູຮັບ ________________________________

(ຕ) ການທົດລອງນັ້ນມາທາງປາກຂອງ ________________________________ ທີ່ບອກວ່າເພິ່ນເອງສົມຄວນຈະຮັບສິນຈາກພະອົງແທນທີ່ພະອົງຈະຮັບສິນຈາກເພິ່ນ. ໃນເຫດການນີ້ເຮົາເຫັນຕີເອກອະນຸພາບປາກົດມາຄື:

(ຖ) ພະ ____________ (ທ) ພະ ____________ (ນ) ແລະ ພະ ____________

(ບ)ໃນການຮັບສິນບັບຕິສະມາ ພະເຢຊູເຂົ້າຮ່ວມກັບມະນຸດທີ່ເປັນຄົນຜິດບາບຈຶ່ງສະແດງວ່າພະເຢຊູເປັນ ________________________________________ ແທ້.

(ປ) ແຕ່ໃນເວລາດຽວກັນນັ້ນມີພະສຸລາສຽງຈາກຟ້າສະຫວັນທີ່ສະແດງວ່າພະອົງເປັນ________________________________________________ ແທ້.

(ຜ) ພະເຢຊູວາງອຳນາດຂອງພະເຈົ້າໄວ້ຄາວໜຶ່ງເພື່ອຈະຮ່ວມກັບມະນຸດໃນການຕໍ່ສູ້ພະຍາມານ ໂດຍໃຊ້ເຄື່ອງອາວຸດທີ່ພະເຈົ້າປະທານໃຫ້ ຄຣິສຕຽນທຸກຄົນຄື: ____________

(ຝ) ແລະ ________________________________________ ຂອງພະເຈົ້າ.

ຕອບ:

***38*** *ກ. ມະນຸດ* *ຂ. ພະເຈົາ*

***39*** *(ກ) ບັບຕິສະມາ (ຂ) ໂຢຮັນບັບຕິສະໂຕ (ຄ) ຢໍດາເນ (ງ) ຜິດບາບ (ຈ) ຜິດບາບ (ສ) ເຂົາຮ່ວມ (ຊ) ບາບ (ຍ) ໄມ້ກາງແຂນ (ດ) ສິນບັບຕິສະມາ (ຕ) ໂຢຮັນບັບຕິສະໂຕ (ຖ) ບິດາ (ທ) ບຸດ (ນ) ວິນຍານບໍລິສຸດ (ບ) ມະນຸດ (ປ) ພະເຈົາ (ຜ) ພະວິນຍານ (ຝ) ພະທຳ*

**40** ໃຫ້ທ່ານກັບໄປເບິ່ງໜ້າປົກ ບົດທີ 6 ນີ້ ແລ້ວຊີ້ບອກຕົວອັກສອນໃດໝາຍເຖິງພະບິດາ? _

ຕົວອັກສອນໃດໝາຍເຖິງພະບຸດ? ________________________________________

ຕົວອັກສອນໃດໝາຍເຖິງພະວິນຍານບໍລິສຸດ? ________________________________

| |
|---|
| ເປັນຕາງຶດແທ້ວ່າ ພະເຢຊູຊຶ່ງເປັນພະເຈົ້າຜູ້ມີອຳນາດບໍ່ຈຳກັດແລະຜູ້ບໍ່ເຄີຍເຮັດບາບຈັກເທື່ອ ພະອົງນັ້ນແຫຼະ ມາເກີດຮັບຊາດເປັນມະນຸດທີ່ເຂົ້າຮັບສິນບັບຕິສະມາກັບຄົນບາບ ແລະຜົນສຸດທ້າຍຈະຕາຍແທນຄວາມບາບນັ້ນ. ຖ້າຢ່າງນັ້ນຄຣິສຕຽນເຮົາຄວນຈະເຂົ້າຮ່ວມກັບຄົນທີ່ບໍ່ເຊື່ອເພື່ອປະກາດພະທຳຂອງພະເຈົ້າໃຫ້ແກ່ເຂົາຟັງ. ຂໍໃຫ້ທ່ານຈົດແຜນການໄວ້ທີ່ພວກເຮົາຈະພົວພັນກັບຄົນທີ່ຍັງບໍ່ຮູ້ຈັກກັບພະເຈົ້າ. ທ່ານຈະມີໂອກາດແລກປ່ຽນຄວາມຄິດຄວາມເຫັນກັນໃນປະຊຸມຮ່ວມກັບໝູ່. |

*ຢ່າລືມບົດເສັງທີ 6*

ຕອບ:

***40*** *ພະບິດາ ຄ* *ພະບຸດ ກ* *ພະວິນຍານ ຂ*